ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງກະສິກຳ ແລະ ປ່າໄມ້ | ເລກທີ 3604/ກປ

ນະຄອນຫຼວງວຽງຈັນ, ວັນທີ 17 ກັນຍາ 2019

# ຂໍ້ຕົກລົງ
## ວ່າດ້ວຍ ການຂຶ້ນທະບຽນວິຊາການຢາປາບສັດຕູພືດ

- ອີງຕາມ ດຳລັດຂອງລັດຖະບານ ວ່າດ້ວຍການຄຸ້ມຄອງຢາປາບສັດຕູພືດ ເລກທີ 258/ລບ, ລົງວັນທີ 24 ສິງຫາ 2017;
- ອີງຕາມ ດຳລັດຂອງນາຍົກລັດຖະມົນຕີ ວ່າດ້ວຍການຈັດຕັ້ງ ແລະ ເຄື່ອນໄຫວ ຂອງກະຊວງກະສິກຳ ແລະ ປ່າໄມ້ ເລກທີ 99/ນຍ, ລົງວັນທີ 09 ມີນາ 2017;
- ອີງຕາມ ໜັງສືສະເໜີ ຂອງກົມປູກຝັງ ເລກທີ 1646/ກປຝ, ລົງວັນທີ 30 ກໍລະກົດ 2019;
- ອີງຕາມ ການຄົ້ນຄວ້າ ແລະ ສະເໜີ ຂອງກົມນະໂຍບາຍ ແລະ ນິຕິກຳ ເລກທີ 481/ກນບ, ລົງວັນທີ 16 ສິງຫາ 2019

**ລັດຖະມົນຕີກະຊວງກະສິກຳ ແລະ ປ່າໄມ້ ອອກຂໍ້ຕົກລົງ:**

## ໝວດທີ 1
## ບົດບັນຍັດທົ່ວໄປ

**ມາດຕາ 1 ຈຸດປະສົງ**

ຂໍ້ຕົກລົງສະບັບນີ້ ກຳນົດ ຫຼັກການ, ລະບຽບການ ແລະ ຂັ້ນຕອນ ກ່ຽວກັບ ການຂຶ້ນທະບຽນວິຊາການຢາປາບສັດຕູພືດ ໃນ ສປປ ລາວ ເພື່ອຮັບປະກັນຄຸນນະພາບ ແລະ ຄວາມປອດໄພ ຂອງຢາປາບສັດຕູພືດ ແນໃສ່ປົກປ້ອງສຸຂະພາບຂອງ ຄົນ, ສັດ, ພືດ ແລະ ສິ່ງແວດລ້ອມ ຈາກຄວາມສ່ຽງທີ່ກ່ຽວຂ້ອງກັບການນຳໃຊ້ຢາປາບສັດຕູພືດທີ່ບໍ່ໄດ້ຂຶ້ນທະບຽນ ປະກອບສ່ວນເຂົ້າໃນການພັດທະນາ ຕາມທິດກະສິກຳສະອາດ, ສີຂຽວ ແລະ ຍືນຍົງ.

**ມາດຕາ 2 ການຂຶ້ນທະບຽນວິຊາການຢາປາບສັດຕູພືດ**

ການຂຶ້ນທະບຽນວິຊາການຢາປາບສັດຕູພືດ ແມ່ນ ຂະບວນການຮັບຮອງດ້ານການຂຶ້ນທະບຽນວິຊາການຢາປາບສັດຕູພືດ ໂດຍຜ່ານການປະເມີນຂໍ້ມູນທາງດ້ານວິທະຍາສາດ ເພື່ອຢັ້ງຢືນວ່າ ຜະລິດຕະພັນທີ່ຈະຂຶ້ນທະບຽນ ນັ້ນ ມີປະສິດທິພາບຕໍ່ເປົ້າໝາຍ ແລະ ບໍ່ມີຄວາມສ່ຽງ ຕໍ່ສຸຂະພາບຂອງ ຄົນ, ສັດ, ພືດ ແລະ ສິ່ງແວດລ້ອມ.

ການຂຶ້ນທະບຽນວິຊາການຢາປາບສັດຕູພືດ ມີ ສາມ ປະເພດ ດັ່ງນີ້:

1. ການຂຶ້ນທະບຽນວິຊາການຢາປາບສັດຕູພືດຊົ່ວຄາວ;
2. ການຂຶ້ນທະບຽນວິຊາການຢາປາບສັດຕູພືດຖາວອນ;
3. ການຂຶ້ນທະບຽນວິຊາການຢາປາບສັດຕູພືດຊໍ້າກັນ.

**ມາດຕາ 3 ການອະທິບາຍຄໍາສັບ**

ຄໍາສັບທີ່ນໍາໃຊ້ໃນຂໍ້ຕົກລົງສະບັບນີ້ ມີຄວາມໝາຍ ດັ່ງນີ້:

1. **ດໍາລັດ** ໝາຍເຖິງ ດໍາລັດຂອງລັດຖະບານ ວ່າດ້ວຍການຄຸ້ມຄອງຢາປາບສັດຕູພືດ ເລກທີ 258/ລບ, ວັນທີ 24 ສິງຫາ 2017;
2. **ຢາປາບສັດຕູພືດຊີວະພາບ** ນອກຈາກທີ່ໄດ້ກໍານົດໄວ້ໃນ ມາດຕາ 3 ຂໍ້ທີ 17 ຂອງດໍາລັດແລ້ວ ຍັງໝາຍເຖິງ ຢາປາບສັດຕູພືດທາງຊີວະວິທະຍາ ຫຼື ວັດຖຸທີ່ໄດ້ມາຈາກທໍາມະຊາດ ຊຶ່ງສາມາດປະກອບ ແລະ ນໍາໃຊ້ ຄ້າຍຄືກັບຢາປາບສັດຕູພືດທາງເຄມີທົ່ວໄປ ເພື່ອນໍາໃຊ້ສໍາລັບການຄວບຄຸມສັດຕູພືດໃນໄລຍະສັ້ນ;
3. **ຜະລິດຕະພັນຢາປາບສັດຕູພືດ** ໝາຍເຖິງ ສານອອກລິດ ແລະ ສ່ວນປະກອບອື່ນ ທີ່ໄດ້ຜ່ານການປຸງແຕ່ງ ແລະ ບັນຈຸໃນພາຊະນະ ເພື່ອຈໍາໜ່າຍ;
4. **ຄວາມເປັນພິດກະທັນຫັນ** ໝາຍເຖິງ ການກະທົບຂອງວັດຖຸທີ່ເປັນພິດ ຊຶ່ງເກີດມາຈາກການໄດ້ຮັບພິດຄັ້ງດຽວ ຫຼື ຫຼາຍຄັ້ງ ໃນໄລຍະເວລາສັ້ນ ຫຼື ຕໍ່າກວ່າ ຊາວສີ່ ຊົ່ວໂມງ;
5. **ຄວາມອັນຕະລາຍ** ໝາຍເຖິງ ຄຸນລັກສະນະສະເພາະທີ່ເກີດຈາກສານເຄມີ ຫຼື ເຊື້ອຈຸລິນຊີ ຊຶ່ງອາດເຮັດໃຫ້ເກີດຜົນເສຍຫາຍ ຕໍ່ຊັບສິນ, ສຸຂະພາບຂອງ ຄົນ, ສັດ, ພືດ ແລະ ສິ່ງແວດລ້ອມ;
6. **ຄວາມເປັນພິດ** ໝາຍເຖິງ ລັກສະນະສະເພາະ ທາງວັດຖຸວິທະຍາ ແລະ ຊີວະວິທະຍາຂອງສານເຄມີ ທີ່ສາມາດສ້າງຄວາມອັນຕະລາຍ ຫຼື ຄວາມເສຍຫາຍ ຕໍ່ສິ່ງທີ່ມີຊີວິດ ຊຶ່ງບໍ່ໄດ້ລວມເອົາດ້ານກົນຈັກ;
7. **ຄວາມເປັນພິດຕໍ່ພືດ** ໝາຍເຖິງ ພິດ ຫຼື ຜົນກະທົບທີ່ເປັນອັນຕະລາຍຂອງສານເຄມີ ຕໍ່ ພືດ;
8. **ລະດັບການຕົກຄ້າງສູງສຸດ** ໝາຍເຖິງ ປະລິມານສານພິດຕົກຄ້າງສູງສຸດ ທີ່ຍອມຮັບໄດ້ຢ່າງເປັນທາງການ ໃນສິນຄ້າກະສິກໍາ, ອາຫານ ຫຼື ອາຫານສັດ;
9. **ຄວາມສ່ຽງ** ໝາຍເຖິງ ການເຄື່ອນໄຫວ ທີ່ອາດຈະສ້າງຜົນກະທົບທາງລົບ ຕໍ່ສຸຂະພາບຂອງຄົນ, ສັດ, ພືດ ຫຼື ສິ່ງແວດລ້ອມ ແລະ ສິ່ງຜົນໃຫ້ໄດ້ຮັບຄວາມອັນຕະລາຍຈາກຢາປາບສັດຕູພືດ;
10. **ການຂຶ້ນທະບຽນວິຊາການຢາປາບສັດຕູພືດຊົ່ວຄາວ** ໝາຍເຖິງ ຂະບວນການຮັບຮອງດ້ານວິຊາການ ສໍາລັບ ຜະລິດຕະພັນຢາປາບສັດຕູພືດ ທີ່ ຜະລິດຂຶ້ນ ຫຼື ນໍາເຂົ້າເປັນຄັ້ງທໍາອິດ ຫຼື ກໍາລັງຢູ່ໃນຂັ້ນຕອນທົດສອບປະສິດທິພາບ;
11. **ການຂຶ້ນທະບຽນວິຊາການຢາປາບສັດຕູພືດຖາວອນ** ໝາຍເຖິງ ຂະບວນການຮັບຮອງດ້ານວິຊາການ ສໍາລັບ ຜະລິດຕະພັນຢາປາບສັດຕູພືດ ທີ່ມີລາຍລະອຽດ ກ່ຽວກັບ ຜົນໄດ້ຮັບຂອງການທົດສອບປະສິດທິພາບ ຢູ່ພາຍໃນປະເທດ ແລະ ມີບົດປະເມີນຄວາມຖືກຕ້ອງທາງດ້ານວິຊາການ;

12. **ການຂຶ້ນທະບຽນວິຊາການຢາປາບສັດຕູພືດຊໍ້າກັນ** ໝາຍເຖິງ ຂະບວນການຮັບຮອງດ້ານວິຊາການ ສໍາລັບ ຜະລິດຕະພັນຢາປາບສັດຕູພືດຊະນິດດຽວກັນ ທີ່ໄດ້ຂຶ້ນທະບຽນວິຊາການຢາປາບສັດຕູພືດຖາວອນ ແລ້ວ, ຫຼັງຈາກນັ້ນ ໄດ້ອະນຸຍາດ ໃຫ້ຜູ້ຮ້ອງຂໍອື່ນ ໂດຍມີໃບມອບສິດຈາກເຈົ້າຂອງຜູ້ທີ່ໄດ້ຂຶ້ນທະບຽນເດີມ;
13. **ໜ່ວຍງານຂຶ້ນທະບຽນວິຊາການຢາປາບສັດຕູພືດ** ໝາຍເຖິງ ພະແນກລະບຽບການຂອງກົມປູກຝັງ, ກະຊວງກະສິກໍາ ແລະ ປ່າໄມ້;
14. **ຂັ້ນຕອນການແຈ້ງເຕືອນຂໍ້ມູນລ່ວງໜ້າ** ໝາຍເຖິງ ຂະບວນການຂອງສາກົນ ເພື່ອການແລກປ່ຽນ, ແຈ້ງ ຫຼື ຈັດການຂໍ້ມູນການແຈ້ງ ກ່ຽວກັບ ສານເຄມີທີ່ຫ້າມນໍາໃຊ້ ຫຼື ຈໍາກັດຢ່າງເຂັ້ມງວດ ແລະ ການປະສົມຢາປາບສັດຕູພືດທີ່ມີຄວາມອັນຕະລາຍຮ້າຍແຮງ ຕາມສົນທິສັນຍາຣົດເຕີດໍາ ກ່ຽວກັບ ຂັ້ນຕອນການແຈ້ງຂໍ້ມູນລ່ວງໜ້າ ສໍາລັບ ສານເຄມີ ແລະ ຢາປາບສັດຕູພືດອັນຕະລາຍ ຈໍານວນໜຶ່ງ ໃນການຄ້າສາກົນ.

**ມາດຕາ 4 ຂອບເຂດການນໍາໃຊ້**

ຂໍ້ຕົກລົງສະບັບນີ້ ນໍາໃຊ້ສໍາລັບ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທັງພາຍໃນ ແລະ ຕ່າງປະເທດ ທີ່ກ່ຽວຂ້ອງກັບການຂຶ້ນທະບຽນວິຊາການຢາປາບສັດຕູພືດ ໃນ ສປປ ລາວ.

## ໝວດທີ 2
## ການຂຶ້ນທະບຽນວິຊາການຢາປາບສັດຕູພືດຊົ່ວຄາວ

**ມາດຕາ 5 ການຂຶ້ນທະບຽນວິຊາການຢາປາບສັດຕູພືດຊົ່ວຄາວ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ມີຈຸດປະສົງ ຜະລິດ ຫຼື ນໍາເຂົ້າ ຢາປາບສັດຕູພືດທີ່ບໍ່ເຄີຍຂຶ້ນທະບຽນ ໃນ ສປປ ລາວ ເພື່ອເປົ້າໝາຍນໍາໃຊ້ທີ່ກໍານົດໃຫ້ສະເພາະ ຕ້ອງສະເໜີ ຕໍ່ ກົມປູກຝັງ ເພື່ອຂໍຂຶ້ນທະບຽນວິຊາການຢາປາບສັດຕູພືດຊົ່ວຄາວ ໂດຍປະກອບເອກະສານ ດັ່ງນີ້:

1. ໃບຄໍາຮ້ອງ ຕາມແບບພິມກໍານົດໄວ້ ໃນເອກະສານຊ້ອນທ້າຍ 1;
2. ສໍາເນົາ ໃບທະບຽນວິສາຫະກິດ;
3. ສໍາເນົາ ໃບອະນຸຍາດດໍາເນີນທຸລະກິດຢາປາບສັດຕູພືດ;
4. ຕົວຢ່າງສະຫຼາກຢາປາບສັດຕູພືດ ຫຼື ແຜ່ນພັບຕິດແນບກັບພາຊະນະບັນຈຸ;
5. ຕົວຢ່າງເອກະສານ ຫຼື ພາບຖ່າຍສະແດງລັກສະນະພາຊະນະບັນຈຸ;
6. ຊຸດເອກະສານເຕັກນິກ ແລະ ສະໜອງຕົວຢ່າງ ສໍາລັບ ການຂຶ້ນທະບຽນວິຊາການຢາປາບສັດຕູພືດຊົ່ວຄາວ ຕາມທີ່ໄດ້ກໍານົດໄວ້ໃນມາດຕາ 6 ແລະ 7 ຂອງຂໍ້ຕົກລົງສະບັບນີ້;
7. ແຜນການທົດສອບນໍາໃຊ້ ກ່ຽວກັບ ຄຸນນະພາບ ແລະ ປະສິດທິພາບ ຂອງຢາປາບສັດຕູພືດ ຢູ່ຫ້ອງວິໄຈ ແລະ ພາກສະໜາມ ໃນພື້ນທີ່ເປົ້າໝາຍ ຕາມທີ່ກໍານົດໄວ້ໃນບົດແນະນໍາ ຂອງກົມປູກຝັງ;
8. ໃບມອບສິດ ພ້ອມທັງ ສໍາເນົາບັດປະຈໍາຕົວຂອງຜູ້ຍື່ນເອກະສານ.

ໃນກໍລະນີນໍາເຂົ້າ ຕ້ອງປະກອບເອກະສານເພີ່ມ ດັ່ງນີ້:

1. ໃບມອບສິດ ຈາກ ຜູ້ຜະລິດຢາປາບສັດຕູພືດ ຂອງປະເທດສົ່ງອອກ;
2. ສໍາເນົາ ໃບຂຶ້ນທະບຽນຢາປາບສັດຕູພືດ ຢູ່ປະເທດຕົ້ນກໍາເນີດ;
3. ສໍາເນົາ ໃບຢັ້ງຢືນຜົນການວິໄຈສ່ວນປະກອບຂອງຢາປາບສັດຕູພືດ ຈາກປະເທດຕົ້ນກໍາເນີດ.